# ໃບອະນຸຍາດໃຫ້ເປີດເຜີຍຂໍ້ມູນ

# ຕາມກົດໝາຍວ່າດ້ວຍການຮັກສາຄວາມລັບ

ແກ່ກະຊວງເຄຫະສຖານແລະການພັທນາຕົວເມືອງຂອງສຫະຣັຖ (HUD)
ແລະອົງການ/ເຈົ້າໜ້າທີ່ເຄຫະສຖານ (HA)

**ກະຊວງເຄຫະສຖານແລະ**
**ການພັທນາຕົວເມືອງຂອງສຫະຣັຖ**
ກົມເຄຫະສຖານຫລວງແລະສຳລັບຊົນເຜົ່າອາເມຣິກັນອິນດຽນ

| | |
|---|---|
| PHA ຂໍຮ້ອງໃຫ້ເປີດເຜີຍຂໍ້ມູນ **(ໃຫ້ຂ້າອອກຖ້າບໍ່ມີ)**<br>(ບ່ອນຢູ່, ຊື່ຜູ້ທີ່ຄວນຕິດຕໍ່, ແລະວັນທີ) | IHA ຂໍຮ້ອງໃຫ້ເປີດເຜີຍຂໍ້ມູນ **(ໃຫ້ຂ້າອອກຖ້າບໍ່ມີ)**<br>(ບ່ອນຢູ່, ຊື່ຜູ້ທີ່ຄວນຕິດຕໍ່, ແລະວັນທີ) |

**ກົດໝາຍບັງຄັບ:** ວັກ 904 ຂອງກົດໝາຍວ່າດ້ວຍການຊ່ວຍເຫລືອປະຊາຊົນຜູ້ບໍ່ມີທີ່ພັກອາສັຍ ສບັບປີ 1988, ດັດແປງໂດຍວັກ 903 ຂອງກົດໝາຍວ່າດ້ວຍການພັທນາເຄຫະສຖານແລະປະຊາຄົມ ສບັບປີ 1992 ແລະວັກ 3003 ຂອງ ກົດໝາຍສບັບປີ 1993 ວ່າດ້ວຍຄວາມສົມດູນຂອງງົບປະມານ. ກົດໝາຍສບັບນີ້ໄດ້ບັນທຶກໄວ້ຢູ່ວັກ 42 ຂອງກົດຣັຖບານກາງ 3544 (42 U.S.C. 3544).

ກົດໝາຍສບັບນີ້ບົ່ງໃຫ້ທ່ານຍິນຍອມເຊັນໜັງສືອະນຸຍາດ: (1) ໃຫ້ກະຊວງເຄຫະສຖານແລະການພັທນາຕົວເມືອງ (HUD) ແລະອົງການ/ເຈົ້າໜ້າທີ່ເຄຫະສຖານ (HA) ກວດເບິ່ງຣາຍໄດ້ຂອງທ່ານຈາກວຽກປັດຈຸບັນແລະວຽກທີ່ຜ່ານມາ, (2) ໃຫ້ HUDແລະ HA ຂໍຂໍ້ມູນກ່ຽວກັບເງິນຊ່ວຍເຫລືອຄົນວ່າງງານທີ່ທ່ານໄດ້ຮ້ອງຂໍເອົານຳອົງການຂອງຣັຖ ທີ່ມີໜ້າທີ່ຮັບຜິດຊອບເຣື່ອງນີ້, (3) ໃຫ້ HUD ຂໍບາງຂໍ້ມູນກ່ຽວກັບພາສີຣາຍໄດ້ຈາກຫ້ອງການປະກັນສັງຄົມ (SSA) ແລະກົມອາກອນຣາຍໄດ້ຂອງສຫະຣັຖ (IRS). ນອກຈາກນັ້ນ ກົດໝາຍສບັບນີ້ຍັງໄດ້ບົ່ງໃຫ້ມີການກວດສອບຣາຍໄດ້ຈາກແຫລ່ງອື່ນ ທີ່ບໍ່ຂຶ້ນກັບຣັຖບານ. ເພາະສນັ້ນ, HUD ຫລື HA ອາດຮ້ອງຂໍຂໍ້ມູນຈາກບັນດາສຖາບັນການເງິນອື່ນໆ ເພື່ອກວດເບິ່ງວ່າທ່ານຈະມີເງື່ອນໄຂພຽງພໍບໍ່ ຫລືວ່າທ່ານຄວນຈະໄດ້ຮັບການຊ່ວຍເຫລືອຫລາຍປານໃດ.

**ຈຸດປະສົງ:** ໂດຍການເຊັນໃບອະນຸຍາດນີ້, ທ່ານຍິນຍອມໃຫ້ HUD ແລະ HA ຂໍຂໍ້ມູນກ່ຽວກັບຣາຍໄດ້ຂອງທ່ານຈາກອົງການທີ່ກ່າວມານັ້ນ. HUD ແລະ HA ຕ້ອງການຂໍ້ມູນພວກນີ້ ເພື່ອກວດກາຣາຍໄດ້ຂອງຄອບຄົວທ່ານ ເພື່ອໃຫ້ແນ່ໃຈວ່າທ່ານມີເງື່ອນໄຂພຽງພໍທີ່ຈະໄດ້ຮັບການຊ່ວຍເຫລືອແລະການຊ່ວຍເຫລືອທີ່ໄດ້ຮັບນັ້ນ ຖືກຕ້ອງດີບໍ່. HUD ແລະ HA ອາດຈະນຳຂໍ້ມູນຣາຍໄດ້ຂອງທ່ານຈາກອົງການທີ່ກ່າວມາຂ້າງເທິງ ໄປປຽບທຽບກັບຂໍ້ມູນທີ່ມີຢູ່ ເພື່ອກວດກາເບິ່ງວ່າທ່ານມີສິດໄດ້ຮັບການຊ່ວຍເຫລືອແລະຄວນໄດ້ຫລາຍຊ່ຳໃດ.

**ການນຳໃຊ້ຂໍ້ມູນທີ່ຈະໄດ້ຮັບ:** HUD ມີໜ້າທີ່ຮັບຜິດຊອບປ້ອງກັນຂໍ້ມູນກ່ຽວກັບຣາຍໄດ້ຂອງທ່ານທີ່ໄດ້ມາ ອີງຕາມກົດໝາຍປີ1974 ວ່າດ້ວຍຄວາມລັບສ່ວນບຸກຄົນວັກ 5 ຂອງກົດຣັຖບານກາງ 552a (5 USC 552a). HUD ອາດເປີດເຜີຍຂໍ້ມູນຂອງທ່ານ (ນອກຈາກຂໍ້ມູນກ່ຽວກັບອາກອນຣາຍໄດ້) ເພື່ອເອົາໄປໃຊ້ໃນການປະຕິບັດງານບາງຢ່າງ ເຊັ່ນເປີດເຜີຍໃຫ້ອົງການຣັຖບານອື່ນໆ ເພື່ອເອົາໄປໃຊ້ໃນການປະຕິບັດກົດໝາຍ, ເພື່ອຄວາມເໝາະສົມໃນການແຕ່ງຕັ້ງຂ້າຣາຊການຫລວງ ແລະໃຫ້ HA ຕ່າງໆ ເພື່ອກຳນົດການຊ່ວຍເຫລືອດ້ານເຄຫະສຖານ. ອີກປະການນຶ່ງ, ອີງຕາມກົດໝາຍຣັຖວ່າດ້ວຍການຮັກສາຄວາມລັບສ່ວນບຸກຄົນ HA ມີຄວາມຮັບຜິດຊອບໃນການປ້ອງກັນຄວາມລັບຂອງຂໍ້ມູນກ່ຽວກັບຣາຍໄດ້ທີ່ຕົນໄດ້ຮັບມາ. ຖ້າວ່າພນັກງານຂອງ HUD ແລະ HA ຫາກເປີດເຜີຍຂໍ້ມູນດັ່ງກ່າວໂດຍບໍ່ໄດ້ຮັບອະນຸຍາດ, ຫລືວ່າ ເອົາຂໍ້ມູນກ່ຽວກັບຣາຍໄດ້ໄປໃຊ້ໃນທາງບໍ່ດີ, ເຂົາເຈົ້າອາດຖືກປັບໃໝໃສ່ໂທດໄດ້. **ເຈົ້າຂອງເຮືອນເຊົ່າບໍ່ມີສິດຂໍ ຫລືໄດ້ຮັບຂໍ້ມູນຕ່າງໆ ທີ່ບົ່ງໄວ້ໃນໃບອະນຸຍາດນີ້.**

**ຜູ້ທີ່ຕ້ອງເຊັນໃບສົມຍອມອະນຸຍາດ:** ສມາຊິກຄອບຄົວອາຍຸ18 ປີຂຶ້ນໄປ ຕ້ອງເຊັນໃບອະນຸຍາດດັ່ງກ່າວ. ບຸກຄົນອື່ນທີ່ເຂົ້າມາຢູ່ໃໝ່ແລະມີອາຍຸ18 ປີຂຶ້ນໄປ ຫລືເມື່ອໃດສມາຊິກຄອບຄົວມີອາຍຸເຖິງ18 ປີ ກໍຕ້ອງເຊັນໃບອະນຸຍາດດັ່ງກ່າວ.
ບຸກຄົນຜູ້ໃດທີ່ຍື່ນຂໍການຊ່ວຍເຫລືອ ຫລືໄດ້ຮັບການຊ່ວຍເຫລືອໃນໂຄງການທີ່ກ່າວຢູ່ຂ້າງລຸ່ມນີ້ ຕ້ອງເຊັນໃບອະນຸຍາດສົມຍອມໃຫ້ຮ້ອງຂໍເອົາຂໍ້ມູນ:

- ໂຄງການເຮືອນຫລວງທີ່ອົງການເຄຫະສຖານ (PHA) ມີໄວ້ໃຫ້ເຊົ່າ
- ໂຄງການເຮືອນທີ່ສ້າງສຳເຣັດແລ້ວແລະຄອບຄົວມີໂອກາດຊື້ໄດ້
- ໂຄງການຊ່ວຍເຫລືອຊຶ່ງກັນແລະກັນ ເພື່ອໃຫ້ມີໂອກາດເປັນເຈົ້າຂອງເຮືອນໄດ້
- ໂຄງການເຊົ່າທີ່ພັກອາສັຍຕາມກົດໝາຍ ວັກ 23 ແລະ 19(c)
- ໂຄງການເງິນຊ່ວຍເຫລືອເຣື່ອງທີ່ພັກອາສັຍຕາມກົດໝາຍ ວັກ 23
- ໂຄງການເຮືອນຫລວງຂອງ PHA ທີ່ມີໄວ້ໃຫ້ຊົນເຜົ່າອາເມຣິກັນອິນດຽນເຊົ່າ
- ໂຄງການຢັ້ງຢືນໃຫ້ເຊົ່າຂອງກົດໝາຍ ວັກ 8
- ໂຄງການບັດVoucher ຫລືບັດອະນຸຍາດໃຫ້ເລືອກທີ່ພັກອາສັຍ ວັກ 8
- ໂຄງການສ້ອມແປງພໍໃຫ້ຢູ່ໄດ້ຂອງກົດໝາຍ ວັກ 8

**ກໍຣະນີບໍ່ຍອມເຊັນໃບອະນຸຍາດ:** ຖ້າທ່ານບໍ່ຍອມເຊັນໃບອະນຸຍາດນີ້, ທ່ານອາດຖືກຕັດສິນວ່າບໍ່ມີເງື່ອນໄຂພຽງພໍ ທີ່ຈະໄດ້ຮັບການຊ່ວຍເຫລືອດ້ານທີ່ພັກອາສັຍ ຫລືອາດຖືກຕັດການຊ່ວຍເຫລືອທີ່ທ່ານໄດ້ຮັບຢູ່ແລ້ວ ຫລືພ້ອມກັນທັງສອງຢ່າງ. ການຕັດສິນທັງສອງຢ່າງທີ່ກ່າວມານັ້ນ ແມ່ນອ້າງອີງຕາມຣະບຽບການພິຈາຣະນາຄຳຮ້ອງທຸກແລະຕາມກົດໝາຍ ວັກ 8 ຂອງຣະບຽບການຮັບຟັງເຫດຜົນແບບບໍ່ເປັນທາງການຂອງ HA.

**ແຫລ່ງຂໍ້ມູນທີ່ຈະໄດ້ຮັບ:**
ອົງການເກັບກຳຂໍ້ມູນກ່ຽວກັບຄ່າຈ້າງແຮງງານຂອງຣັຖ. (ໃບອະນຸຍາດນີ້ຈຳກັດຢູ່ພຽງຄ່າຈ້າງແຮງງານແລະເງິນທົດແທນເງິນເດືອນເວລາທີ່ວ່າງງານ ຊຶ່ງຂ້າພະເຈົ້າໄດ້ຮັບໃນລະຍະເວລາຕ່າງໆພາຍໃນ 5 ປີທີ່ຜ່ານມາ, ໃນເວລາທີ່ຂ້າພະເຈົ້າໄດ້ຮັບການຊ່ວຍເຫລືອດ້ານທີ່ພັກອາສັຍ.)

ຫ້ອງການປະກັນສັງຄົມ SSA (HUD ເທົ່ານັ້ນ) (ໃບອະນຸຍາດສບັບນີ້ໃຊ້ໄດ້ແຕ່ສຳລັບຂໍ້ມູນກ່ຽວກັບຄ່າຈ້າງແຮງງານ ແລະເງິນທີ່ໄດ້ຈາກການດຳເນີນທຸຣະກິດສ່ວນຕົວຫລືເງິນເບັ້ຍບຳນານ ຕາມທີ່ລະບຸໄວ້ໃນວັກ 23 6103(1)(7)(A) ຂອງກົດໝາຍພາສີອາກອນ.

ກົມພາສີອາກອນຂອງສຫະຣັຖ (HUD ເທົ່ານັ້ນ) (ໃບອະນຸຍາດສບັບນີ້ແມ່ນສຳລັບຣາຍໄດ້ ທີ່ບໍ່ມາຈາກວຽກການ [ເຊັ່ນວ່າດອກເບັ້ຍແລະກຳໄລ].)

ຂໍ້ມູນທີ່ຕ້ອງການ ກໍສາມາດຂໍໄດ້ໂດຍກົງຈາກ: (ກ) ນາຍຈ້າງໃນປັດຈຸບັນຫລືໃນອະດີດກ່ຽວກັບເງິນເດືອນແລະຄ່າແຮງງານ ແລະ (ຂ) ສຖາບັນການເງິນກ່ຽວກັບຣາຍໄດ້ ທີ່ບໍ່ມາຈາກວຽກງານ (ເຊັ່ນວ່າດອກເບັ້ຍແລະຜົນກຳໄລ). ຂ້າພະເຈົ້າຮັບຮູ້ວ່າ ຂໍ້ມູນກ່ຽວກັບຣາຍໄດ້ທີ່ໄດ້ມາຈາກແຫລ່ງເຫລົ່ານີ້ ຈະນຳໄປໃຊ້ເພື່ອຢືນຢັນຂໍ້ມູນ ທີ່ຂ້າພະເຈົ້າໄດ້ບອກໄປເພື່ອພິຈາຣະນາວ່າຂ້າພະເຈົ້າມີເງື່ອນໄຂພຽງພໍທີ່ຈະເຂົ້າຮ່ວມໃນໂຄງການຊ່ວຍເຫລືອດ້ານທີ່ພັກອາສັຍແລະເພື່ອໃຊ້ກຳນົດຈຳນວນການຊ່ວຍເຫລືອ. ເພາະສນັ້ນ ເອກສານສບັບນີ້ ພຽງແຕ່ອະນຸຍາດໃຫ້ນາຍຈ້າງແລະສຖາບັນການເງິນມອບຂໍ້ມູນໂດຍກົງກ່ຽວກັບລະຍະເວລາຕ່າງໆພາຍໃນ 5 ປີທີ່ຜ່ານມາ ໃນເວລາທີ່ຂ້າພະເຈົ້າໄດ້ຮັບເງິນຊ່ວຍເຫລືອໃນດ້ານທີ່ພັກອາສັຍຢູ່ນັ້ນ.

**ຍິນຍອມ: ຂ້າພະເຈົ້າຍິນຍອມອະນຸຍາດໃຫ້ HUD ຫລື HA ຂໍແລະຮັບຂໍ້ມູນກ່ຽວກັບລາຍໄດ້ຂອງຂ້າພະເຈົ້າຈາກແຫລ່ງຕ່າງໆທີ່ຂຽນລົງໃນໃບອະນຸຍາດນີ້ ເພື່ອນຳໄປຢືນຢັນວ່າຂ້າພະເຈົ້າມີເງື່ອນໄຂພຽງພໍ ທີ່ຈະໄດ້ຮັບເງິນຊ່ວຍເຫລືອ ແລະເພື່ອກຳນົດຈຳນວນເງິນຊ່ວຍເຫລືອຈາກໂຄງການຊ່ວຍເຫລືອດ້ານທີ່ພັກອາສັຍຂອງ HUD. ຂ້າພະເຈົ້າຮັບຮູ້ວ່າບັນດາ HA ທີ່ໄດ້ຮັບຂໍ້ມູນກ່ຽວກັບລາຍໄດ້ຂອງຂ້າພະເຈົ້າ ບໍ່ມີສິດທີ່ຈະໃຊ້ຂໍ້ມູນເຫລົ່ານີ້ ເພື່ອປະຕິເສດ, ລຸດ ຫລືຕັດການຊ່ວຍເຫລືອ ໂດຍທີ່ບໍ່ໄດ້ຊອກຫາຂໍ້ມູນຈາກແຫລ່ງອື່ນມາຢືນຢັນອີກວ່າ ລາຍໄດ້ນັ້ນ ຕົກເປັນຈຳນວນເທົ່າໃດ, ຂ້າພະເຈົ້າອາດສາມາດໃຊ້ຈ່າຍເງິນເຫລົ່ານັ້ນຢ່າງແທ້ຈິງບໍ່ ແລະຂ້າພະເຈົ້າໄດ້ຮັບເງິນເຫລົ່ານັ້ນໃນເວລາໃດ. ອີກປະການນຶ່ງ, ຂ້າພະເຈົ້າຕ້ອງມີໂອກາດ ທີ່ຈະໄດ້ໂຕ້ແຍ້ງ ຄຳຕັດສິນຂອງ HA.**

ໃບຍິນຍອມສບັບນີ້ຈະໝົດອາຍຸ 15 ເດືອນຫລັງຈາກມື້ເຊັນ.

ລາຍເຊັນ:

| | | | |
|---|---|---|---|
| ຫົວໜ້າຄອບຄົວ | ວັນທີ | | |
| ນຳເບີປະກັນສັງຄົມ(ຖ້າມີ)ຂອງຫົວໜ້າຄອບຄົວ | | ສມາຊິກຄອບຄົວຜູ້ມີອາຍຸຫລາຍກ່ວາ 18 ປີ | ວັນທີ |
| ຜົວ/ເມັຍ | ວັນທີ | ສມາຊິກຄອບຄົວຜູ້ມີອາຍຸຫລາຍກ່ວາ 18 ປີ | ວັນທີ |
| ສມາຊິກຄອບຄົວຜູ້ມີອາຍຸຫລາຍກ່ວາ18 ປີ | ວັນທີ | ສມາຊິກຄອບຄົວຜູ້ມີອາຍຸຫລາຍກ່ວາ 18 ປີ | ວັນທີ |
| ສມາຊິກຄອບຄົວຜູ້ມີອາຍຸຫລາຍກ່ວາ18 ປີ | ວັນທີ | ສມາຊິກຄອບຄົວຜູ້ມີອາຍຸຫລາຍກ່ວາ 18 ປີ | ວັນທີ |

**ຄຳແຈ້ງການກ່ຽວກັບກົດໝາຍວ່າດ້ວຍການຮັກສາຄວາມລັບສ່ວນບຸກຄົນ.** ກົດໝາຍບັງຄັບ: ກະຊວງເຄຫະສຖານແລະພັທນາຕົວເມືອງ (HUD) ໄດ້ຮັບອະນຸຍາດໃຫ້ເກັບກຳຂໍ້ມູນດັ່ງກ່າວໂດຍອ້າງອີງໃສ່ກົດໝາຍສຫະຣັຖວ່າດ້ວຍການເຄຫະສຖານ ສບັບປີ 1937 (42 U.S.C. 1437 et. seq.), ກົດໝາຍວ່າດ້ວຍສິດທິຂອງພົລເມືອງໝວດ 6 ສບັບປີ 1964 (42 U.S.C. 2000d), ແລະກົດໝາຍວ່າດ້ວຍຄວາມຍຸຕິທັມໃນການຊອກຫາບ່ອນຢູ່ອາສັຍ (42 U.S.C. 3601-19). ອີງຕາມກົດໝາຍວ່າດ້ວຍການພັທນາປະຊາຄົມແລະການເຄຫະສຖານ ສບັບປີ 1987 (42 U.S.C. 3543) ຜູ້ຮ້ອງຂໍແລະຜູ້ທີ່ເຂົ້າຮ່ວມໂຄງການ ຕ້ອງແຈ້ງເບີປະກັນສັງຄົມ (SSN) ຂອງສມາຊິກໃນຄອບຄົວແຕ່ລະຄົນທີ່ມີອາຍຸຕັ້ງແຕ່ຫົກປີ ຂື້ນໄປ. ຈຸດປະສົງ: HUD ເກັບກຳຂໍ້ມູນກ່ຽວກັບລາຍໄດ້ຂອງທ່ານແລະອື່ນໆເພື່ອໃຊ້ເປັນສິ່ງກຳໜົດວ່າທ່ານມີເງື່ອນໄຂພຽງພໍບໍ່, ວ່າຄວນຈະໄດ້ຫ້ອງນອນຂນາດໃດແລະວ່າຄອບຄົວຂອງທ່ານຈະຕ້ອງຈ່າຍເງິນຫລາຍປານໃດ ສຳຫລັບຄ່າສາທາຣະນູປະໂພກ (ນ້ຳ ໄຟ ໂທຣະສັບ ແລະແກັສ). ການໃຊ້ຢ່າງອື່ນ: HUD ຈະໃຊ້ຂໍ້ມູນກ່ຽວກັບລາຍໄດ້ແລະຂໍ້ມູນອື່ນໆເພື່ອຊ່ວຍບໍຣິຫານ ແລະຕິດຕາມເບິ່ງໂຄງການທີ່ຢູ່ອາສັຍ ທີ່ໄດ້ຮັບການຊ່ວຍເຫລືອຈາກ HUD, ເພື່ອປ້ອງກັນຜົນປະໂຫຍດທາງການເງິນຂອງຣັຖບານແລະເພື່ອກວດກາເບິ່ງວ່າຂໍ້ມູນທີ່ທ່ານໃຫ້ມານັ້ນຖືກຕ້ອງທຸກປະການ. ຂໍ້ມູນເຫລົ່ານີ້ສາມາດເປີດເຜີຍໃຫ້ອົງການທີ່ກ່ຽວຂ້ອງຂອງທ້ອງຖິ່ນ, ຂອງຣັຖ ແລະຂອງຣັຖບານກາງໄດ້ເມື່ອຈຳເປັນ ແລະເປີດເຜີຍແກ່ຜູ້ສືບສວນແລະອັຍການໃນຄະດີແພ່ງ, ຄະດີອາຍາ ແລະເຈົ້າໜ້າທີ່ຄວບຄຸມຣະບຽບການຕ່າງໆ. ຢ່າງໃດກໍດີ ຂໍ້ມູນເຫລົ່ານີ້ຈະບໍ່ໃຫ້ເປີດເຜີຍອອກໄປນອກຂອບເຂດຂອງ HUD ນອກຈາກວ່າໄດ້ຮັບອະນຸຍາດ ຫລືຖືກບັງຄັບທາງກົດໝາຍ. ການປັບໃໝ: ທ່ານຕ້ອງໃຫ້ຂໍ້ມູນທຸກຢ່າງຕາມຄວາມຕ້ອງການຂອງ HA ອັນມີຮວມທັງນຳເບີປະກັນສັງຄົມ ທີ່ທ່ານແລະຜູ້ອາສັຍຢູ່ໃນເຮືອນທັງໝົດທີ່ມີອາຍຸແຕ່ 6 ປີຂື້ນໄປ ມີແລະໃຊ້ຢູ່ໃນປັດຈຸບັນ. ການແຈ້ງເບີປະກັນສັງຄົມຂອງທຸກຄົນທີ່ອາສັຍຢູ່ໃນເຮືອນແລະມີອາຍຸ 6 ປີ ຂື້ນໄປນັ້ນ ເປັນສິ່ງຈຳເປັນແລະການບໍ່ໃຫ້ນຳເບີປະກັນສັງຄົມນີ້ຈະມີຜົນສທ້ອນຕໍ່ການພິຈາຣະນາຄຳຮ້ອງຂອງທ່ານ. ການບໍ່ຍອມແຈ້ງຂໍ້ມູນອັນໃດອັນນຶ່ງທີ່ຂໍໄປນັ້ນ ອາດມີຜົນເຮັດໃຫ້ມີການລ່າຊ້າ ຫລືການປະຕິເສດຄຳຮ້ອງຂອງທ່ານກໍເປັນໄດ້.

**ການປັບໃໝໃນກໍຣະນີທີ່ໃຊ້ຄຳຍິນຍອມນີ້ໄປໃນທາງບໍ່ຖືກຕ້ອງ:**

HUD, HA ຫລືເຈົ້າຂອງເຮືອນ (ຫລືພນັກງານຂອງ HUD, HA ຫລືເຈົ້າຂອງເຮືອນ) ອາດຈະຖືກປັບໃໝ ຖ້ານຳເອົາຂໍ້ມູນທີ່ເກັບກຳມາໄດ້ໂດຍອ້າງອີງໃສ່ໃບຍິນຍອມສບັບນີ້ ໄປເປີດເຜີຍໂດຍບໍ່ໄດ້ຮັບອະນຸຍາດ ຫລືໄປໃຊ້ໃນທາງທີ່ບໍ່ສົມຄວນ.

ຂໍ້ມູນຊຶ່ງເກັບກຳມາໄດ້ໂດຍອີງໃສ່ຟອມຂອງ **HUD-9886** ແມ່ນໃຊ້ໄດ້ແຕ່ສຳລັບຈຸດປະສົງທີ່ບົ່ງຢູ່ໃນໃບຟອມ HUD 9886 ນີ້ເທົ່ານັ້ນ. ບຸກຄົນຜູ້ໃດທີ່ໄດ້ຮັບແລະເປີດເຜີຍຂໍ້ມູນກ່ຽວກັບຜູ້ຮ້ອງຂໍ ຫລືຜູ້ຮ່ວມໂຄງການ ໄປໃນທາງທຸຈຣິດໂດຍເຈຕນາແລະຢ່າງເຕັມໃຈ ຈະຖືວ່າໄດ້ກະທຳຄວາມຜິດຕາມກົດໝາຍແລະອາດຖືກປັບໃໝ ເປັນຈຳນວນເງິນຮອດ 5,000 ດອລລ່າສຫະຣັຖ.

ຜູ້ຮ້ອງຂໍການຊ່ວຍເຫລືອຫລືຜູ້ຮ່ວມໃນໂຄງການຜູ້ໃດ ທີ່ໄດ້ຮັບຜົນສທ້ອນຈາກການເປີດເຜີຍຂໍ້ມູນແບບປະມາດ ມີສິດຟ້ອງເພື່ອຮຽກຮ້ອງເອົາຄ່າເສັຍຫາຍແລະຄ່າປ່ວຍການອື່ນໆຕາມຄວາມເໝາະສົມ ຈາກເຈົ້າໜ້າທີ່ ຫລືພນັກງານຂອງ HUD, HA ຫລືຈາກເຈົ້າຂອງເຮືອນ ຜູ້ຊຶ່ງເປີດເຜີຍຂໍ້ມູນດັ່ງກ່າວໂດຍບໍ່ໄດ້ຮັບອະນຸຍາດ ຫລືໃຊ້ໄປໃນທາງທີ່ບໍ່ເໝາະສົມ.

***ເອກສານສບັບນີ້ ແມ່ນແປມາຈາກເອກສານດ້ານກົດໝາຍສບັບຕ່າງໆ ທີ່ກະຊວງເຄຫະສຖານແລະການພັທນາຕົວເມືອງຂອງສຫະຣັຖໄດ້ນຳອອກເຜີຍແຜ່. ທາງກະຊວງເຄຫະສຖານແລະການພັທນາຕົວເມືອງ ໄດ້ຈັດເອກສານແປເປັນພາສາລາວສບັບນີ້ ໄວ້ສນອງທ່ານເພື່ອອຳນວຍຄວາມສດວກແລະຊ່ວຍໃຫ້ທ່ານສາມາດເຂົ້າໃຈໃນສິດທິແລະພັນທະໜ້າທີ່ຂອງທ່ານ. ສຳເນົາພາສາອັງກິດຂອງເອກສານສບັບນີ້ເທົ່ານັ້ນ ທີ່ເປັນເອກສານທາງການ ແລະມີອຳນາດຜູກມັດທາງດ້ານກົດໝາຍ. ເອກສານທີ່ແປອອກມາເປັນພາສາລາວສບັບນີ້ ບໍ່ແມ່ນເອກສານທາງການແຕ່ຢ່າງໃດ.***